# ຄະນະ 3 ອົງການຈັດຕັ້ງມະຫາຊົນ ສາຂາ ທຫລ ພາກກາງ
# ເຄື່ອນໄຫວວຽກງານຢູ່ຫ້ອງການສະຫະພັນກຳມະບານແຂວງສະຫວັນນະເຂດ

***************************

ເພື່ອປະຕິບັດຕາມແຜນການເຄື່ອນໄຫວວຽກງານຂະບວນການປີ 2017 ພາຍໃຕ້ການຊີ້ນຳ-ນຳພາຂອງສະຫາຍເລຂາໜ່ວຍພັກ ສາຂາ ທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ (ທຫລ.ສຂ) ໃຫ້ປະກົດຜົນເປັນຈິງຕາມລະດັບຄາດໝາຍທີ່ວາງໄວ້ ແລະ ເພື່ອຮັດແໜ້ນສາຍສຳພັນສາມະຄີລະຫວ່າງ ສະຫະພັນກຳມະບານແຂວງສະຫວັນນະເຂດ ກັບ ບັນດາສະມາຊິກກຳມະບານຮາກຖານ ສາຂາທະນາຄານແຫ່ງ ສປປລາວ ພາກກາງ ແຂວງສະຫວັນນະເຂດ ຊຶ່ງຍາມໃດດ້ານວຽກງານກຳມະບານກໍ່ເປັນເຂັມທິດຊີ້ນຳດ້ານແນວຄິດການເມືອງ ໃຫ້ສະມາຊິກພະນັກງານລັດຖະກອນມີສະຕິສູງໃນການຈັດຕັ້ງປະຕິບັດວຽກງານຂອງຕົນດ້ານ 5 ເປັນເຈົ້າ (ຄຳຂວັນກຳມະບານ) ແລະ ມີການດຳລົງຊີວິດທີ່ຖືກຕ້ອງຕາມລະບຽບກົດໝາຍຂອງບ້ານເມືອງ. ຍ້ອນເຫັນໄດ້ຄວາມສຳຄັນອັນມີກຽດດັ່ງກ່າວ,



ໃນຕອນເຊົ້າເວລາ 8:30 ໂມງເຊົ້າ ຂອງວັນທີ 19 ພຶດສະພາ 2017 ຕ່າງໜ້າຄະນະບໍລິຫານງານ 3 ອົງການຈັດຕັ້ງມະຫາຊົນຂອງ ສາຂາ ທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ ໄດ້ລົງຈັດກອງປະຊຸມເຜີຍແຜ່ພາລະບົດບາດ ແລະ ຄວາມຮູ້ພື້ນຖານກ່ຽວກັບວຽກງານການທະນາຄານ ຢູ່ທີ່ຫ້ອງປະຊຸມສະຫະພັນກຳມະບານແຂວງສະຫວັນນະເຂດ ໃຫ້ກຽດເປັນປະທານ ແລະ ກ່າວຕ້ອນຮັບໂດຍສະຫາຍ **ວັນນະລາດ ທົງສາທິລາດ** ປະທານສະຫະພັນກຳມະບານແຂວງສະຫວັນນະເຂດ ມີພະນັກງານພາຍໃນຫ້ອງການສະຫະພັນກຳມະບານແຂວງເຂົ້າຮ່ວມທັງໝົດ 18 ສະຫາຍ, ຍິງ 6 ສະຫາຍ.



ວາລະກອງປະຊຸມໄດ້ເຜີຍແຜ່ກ່ຽວກັບພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງວຽກງານຄຸ້ມຄອງສະຖາບັນການເງິນ ແລະ ວຽກງານຄຸ້ມຄອງມະຫາພາກທາງດ້ານການເງິນ-ເງິນຕາ ໃຫ້ແກ່ບັນດາສະຫາຍສະມາຊິກ 3 ອົງການຈັດຕັ້ງມະຫາຊົນຂອງສະຫະພັນກຳມະບານແຂວງສະຫວັນນະເຂດ ໃຫ້ຮັບຮູ້ ແລະ ເຂົ້າໃຈຕໍ່ກັບພາລະບົດບາດ ຂອງທະນາຄານແຫ່ງ ສປປ ລາວ ເວົ້າລວມ, ເວົ້າສະເພາະແມ່ນຂອບເຂດການຄຸ້ມຄອງຂອງ ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ, ນອກຈາກນັ້ນ, ກໍ່ຍັງເຜີຍແຜ່ກົດໝາຍຄຸ້ມຄອງເງິນຕາຕ່າງປະເທດ; ວິທີການຮັກສາການນຳໃຊ້ເງິນກີບ; ຄວາມຮູ້ພື້ນຖານໃນການຈຳແນກເງິນກີບແທ້ ແລະ ເງິນກີບປອມ ແນໃສ່ໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຮູ້ ແລະ ເຂົ້າໃຈ ເຖິງເນື້ອໃນອັນສຳຄັນຕົ້ນຕໍຂອງການລົງເຜີຍແຜ່ ພ້ອມທັງຫັນປ່ຽນພຶດຕິກຳການນຳໃຊ້ເງິນຕາຕ່າງປະເທດໃຫ້ນັບມື້ນັບຫຼຸດລົງ ແລະ ຫັນມາເຫັນຄວາມສຳຄັນຂອງຄຸນຄ່າເງິນກີບ ແລະ ນຳໃຊ້ເງິນກີບໃຫ້ນັບມື້ຫຼາຍຂຶ້ນເທື່ອລະກ້າວ. ຜ່ານການເຜີຍແຜ່ເນື້ອໃນເອກະສານ ເຫັນໄດ້ວ່າຜູ້ເຂົ້າຮ່ວມກອງປະຊຸມສ່ວນໃຫຍ່ໃຫ້ຄວາມສົນໃຈ ແລະ ກຳໄດ້ໃນຫຼາຍບັນຫາ ຊຶ່ງມີບາງສະຫາຍໄດ້ຊັກຖາມຂໍ້ຂ້ອງໃຈ ແລະ ແລກປ່ຽນບົດຮຽນເພື່ອໃຫ້ເກີດຄວາມກະຈ່າງແຈ້ງຕື່ມ. ຈາກນັ້ນ, ພະນັກງານ ສາຂາທະນາຄານແຫ່ງ ສປປ ລາວ ກໍ່ໄດ້ຕອບຄຳຖາມ ແລະ ແກ້ຂໍ້ຂ້ອງໃຈໃຫ້ກັບຜູ້ເຂົ້າຮ່ວມຮັບຟັງຢ່າງກົງໄປກົງມາ ດ້ວຍບັນຍາກາດອັນຟົດຟື້ນຈົນເຖິງເວລາ 11:30 ໂມງ ຈຶ່ງໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ.

*ຂຽນຂ່າວໂດຍ: ສະຫາຍ ສີລິພອນ ຄຳສີດາ*